ສົ່ງທາງໄປສະນີ, ສົ່ງດ້ວຍ FAX ຫລືເອົາມາສົ່ງໃຫ້:
Fresno Unified School District
STUDENT SERVICES/TRANSFER OFFICE
1350 M. STREET. BLDG. A
FRESNO, CA 93721
PHONE (559) 457-3343 . FAX (559) 457-3375

# ໃບສມັກຂໍເຂົ້າຮຽນໂຮງຮຽນ MAGNET

**(MAGNET SCHOOL APPLICATION)**

ສົກຮຽນ 200_____/200_____

**ກະລຸນາເບິ່ງລາຍລະອຽດສຳຄັນຢູ່ທາງຫລັງເຈັ້ຽ**

**ໂຮງຮຽນຄຸ້ມບ້ານ** ____________________

**ຄຳແນະນຳຕ່າງໆ:**

- ກະລຸນາຂຽນເປັນໂຕພິມ
- ຜູ້ສມັກແຕ່ລະຄົນອາດຈະເລືອກເອົາສອງ(2) ບ່ອນກໍ່ໄດ້
- ຕ້ອງສເນີໃບສມັກພາຍໃນວັນທີທີ່ບອກຢູ່ໃນ ໜັງສືແຈ້ງການຂອງພໍ່ແມ່ແລະນັກຮຽນແລະປື້ມຄູ່ມືລາຍລະອຽດຂອງເຂດໂຮງຮຽນ.
  ກຳນົດວັນສຸດທ້າຍອາດຈະປ່ຽນແປງແຕ່ລະປີ, ປື້ມຄູ່ມືມີຢູ່ອິນເຕີເນັດ website: www.fresno.k12.ca.us.

## ລາຍລະອຽດຂອງນັກຮຽນ

ວັນທີສມັກ____/____/____ ຊື່ນັກຮຽນ______________________________
(ກະລຸນາຂຽນເປັນໂຕພິມ) ຊື່ ນາມສະກຸນ

ເລກປະຈຳຕົວນັກຮຽນ FUSD ________ ວັນເດືອນປີເກີດ(ເດືອນ/ວັນ/ປີ) ________ ໂຮງຮຽນປັດຈຸບັນ ________ ລະດັບຊັ້ນຮຽນທີ່ຮ້ອງຂໍ ________

ທີ່ຢູ່____________________ ຫ້ອງແຖວ________ ເມືອງ________ ລະຫັດໄປສະນີ________

ເພດ: ຊາຍ ☐ ຍິງ ☐ ໂຄງການສຶກສາພິເສດ: ມີ ☐ ບໍ່ມີ ☐ ທີ່ຢູ່ທີ່ຖືກຕ້ອງກົດໝາຍຢູ່ພາຍໃນເຂດໂຮງຮຽນຟເຣສໂນ: ຢູ່ ☐ ບໍ່ຢູ່ ☐

## ໂຮງຮຽນຫລືໂຄງການ MAGNET

ກະລຸນາຂຽນເລກ 1 ແລະ 2 ໃສ່ບ່ອນໝາຍ(box) ທີ່ຊີ້ບອກການເລືອກທີ 1 ແລະທີ 2 ຂອງເຈົ້າ. ອະນຸຍາດໃຫ້ຂຽນໃສ່ການເລືອກສອງ(2) ບ່ອນເທົ່ານັ້ນ.

### ໂຮງຮຽນອຸດົມ

| | | |
|---|---|---|
| **Duncan Polytechnical High School (9-12)**<br>Circle Pathway: Agriculture Business Health<br>Public Service Industrial Technology | | |
| **Edison High School (9-12)**<br>Engineering | | |
| **Fresno High School of International Studies (9-12)**<br>International Baccalaureate, Business, Arts, Environmental Science | | |
| **McLane High School (9-12)**<br>Medical Education & Research | | |
| **Roosevelt High School (9-12)**<br>School of the Arts, Communication and Technology<br>Circle Pathway: Performing Atrs, Visual Arts, Graphic Arts | | |

ກຳນົດໃຫ້ມີຊອງໃບສມັກສຳລັບສີ່ໂຮງຮຽນທີ່ມີລາຍຊື່ຂ້າງລຸ່ມນີ້. ຊອງໃບສມັກຕ້ອງເອົາຈາກແຕ່ລະໂຮງຮຽນແລະສົ່ງໃຫ້ແຕ່ລະໂຮງຮຽນສຳລັບການພິຈາຣະນາທີ່ສອດຄ່ອງກັບນາຕການຂອງການມີສິດທີ່ຈະຖືກຄັດເລືອກ.

| | | |
|---|---|---|
| **Edison High School**<br>Edison Computech (9-12) | | |
| **Sunnyside High School**<br>Sunnyside Doctor's Academy (9-12) | | |
| **Edison Computech Middle School (7-8)**<br>Computer Science, Math and Technology | | |
| **Ewing Elementary School (K-6)**<br>Dual Immersion Language | | |

### ໂຮງຮຽນມັທຍົມ

| | | |
|---|---|---|
| **Fort Miller Middle School (7-8)**<br>Medical Careers Academy | | |
| **Sequoia Middle School (6-8)**<br>Science and Technology Center | | |
| **Wawona Middle School (6-8)**<br>International Baccalaureate Middle Years Program | | |
| **Baird Middle School (5-8)**<br>World Languages/Culture and Agribusiness | | |

### ໂຮງຮຽນປະຖົມ

| | | |
|---|---|---|
| **Yokomi Science Academy (K-6)**<br>Medical Center Science Academy | | |
| **Bullard Talent (K-8)**<br>School of the Arts | | |
| **Hamilton (K-8)**<br>Global Studies Arts and Performance Program | | |
| **M.L. King, Jr. Elementary Education (K-4)**<br>Montessori Early Childhool Education | | |

## ພໍ່ແມ່ຫລືຜູ້ປົກຄອງ

ຕ້ອງມີລາຍເຊັນຂອງພໍ່ແມ່ຫລືຂອງຜູ້ປົກຄອງຢູ່ໃບສມັກນີ້ຈຶ່ງຈະຖືກຕ້ອງ. ໂດຍການເຊັນຊື່ໃສ່ໃບຟອມນີ້, ຂ້າພະເຈົ້າເຂົ້າໃຈແລະຕົກລົງວ່າການຈົດຊື່ເຂົ້າຮຽນຢູ່ໂຮງຮຽນ Magnet ກຳນົດໃຫ້ນັກຮຽນສືບຕໍ່ຮຽນຈົນເຖິງຕອນທ້າຍຂອງການໃຫ້ຄະແນນປະຈຳໄຕຣມາດສຳລັບໂຮງຮຽນປະຖົມແລະໂຮງຮຽນມັທຍົມຫລືຕອນທ້າຍຂອງພາກຮຽນສຳລັບໂຮງຮຽນອຸດົມ. ຂ້າພະເຈົ້າໄດ້ຂຽນລາຍລະອຽດທັງໝົດໃສ່ໃບສມັກນີ້ຢ່າງຖືກຕ້ອງແລະໄດ້ອ່ານແລະໄດ້ເຫັນພ້ອມກັບທຸກໆເງື່ອນໄຂທີ່ໄດ້ວາງໄວ້: (ກະລຸນາເບິ່ງທາງຫລັງເຈ້ຽ)

ຊື່ຂຽນເປັນໂຕພິມ ____________________ ລາຍເຊັນ ____________________

ໂທຣະສັບບ້ານ __________ ໂທຣະສັບບ່ອນເຮັດວຽກ __________ ໂທຣະສັບຕິດໂຕ(Cell Phone)__________

## ທົ່ວໄປ

ເຂດໂຮງຮຽນຟເຣສໂນໄດ້ຈັດຕັ້ງໂຄງການດັດແປງຈຳນວນຫລາຍຂື້ນທົ່ວເຂດໂຮງຮຽນເພື່ອໃຫ້ໂອກາດພໍ່ແມ່, ຜູ້ປົກຄອງແລະນັກຮຽນເລືອກຈາກລະດັບຂອງໂຄງການທີ່ຕອບສນອງກັບຄວາມສົນໃຈແລະຄວາມຕ້ອງການຕ່າງໆຂອງນັກຮຽນແລະເພື່ອສົ່ງເສີມຄວາມແຕກຕ່າງຂອງນັກຮຽນຢູ່ໂຮງຮຽນ.

ນັກຮຽນທັງໝົດມີສິດທີ່ຈະສເນີຂໍເຂົ້າຮຽນໂຮງຮຽນຫລືໂຄງການ Magnet, ລວມທັງນັກຮຽນທີ່ຢູ່ພາຍໃນຂອບເຂດແລະນັກຮຽນທີ່ບໍ່ຢູ່ພາຍໃນຂອງເຂດຂອງເຂດໂຮງຮຽນຟເຣສໂນ. ແນວໃດກໍຕາມ, ການມີສິດທີ່ຈະຖືກຄັດເລືອກຈະຖືກຄັດເລືອກເອົາກ່ອນອີງຕາມທີ່ຢູ່ແລະໂຮງຮຽນທີ່ຮຽນຢູ່ພາຍໃນເຂດໂຮງຮຽນຟເຣສໂນ ຕາມທີ່ໄດ້ບົ່ງໄວ້ຢູ່ນະໂຍບາຍຂອງສະພາປົກຄອງການສຶກສາ(Board Policy) 5116.1.

ຕາມທີ່ໄດ້ຊີ້ບອກຢູ່ທາງຫລັງຂອງເຈັ້ຍ, ສ່ວນຫລາຍຂອງໂຮງຮຽນຫລືໂຄງການ Magnet ບໍ່ມີເງື່ອນໄຂການເຂົ້າຮຽນແລະໃບສມັກນີ້ແມ່ນສິ່ງດຽວເທົ່ານັ້ນທີ່ຕ້ອງສເນີໂດຍພໍ່ແມ່ຫລືຜູ້ປົກຄອງ. ຊອງໃບສມັກ - ນອກຈາກໃບສມັກນີ້ - ຕ້ອງໄດ້ຂຽນໃສ່ໂດຍພໍ່ແມ່ຫລືຜູ້ປົກຄອງເທົ່ານັ້ນສຳລັບສີ່ໂຮງຮຽນທີ່ມີລາຍຊື່ຢູ່ທາງຫລັງເຈັ້ຍທີ່ມີເງື່ອນໄຂສຳລັບການເຂົ້າຮຽນ. ພໍ່ແມ່ຫລືຜູ້ປົກຄອງຮັບຜິດຊອບສຳລັບການຕິດຕໍ່ເອົາລາຍຣະອຽດແລະຊອງໃບສມັກໂດຍຕິດຕໍ່ໂຮງຮຽນໂດຍກົງ.

## ການຄັດເລືອກ

ຫ້ອງການຮັບໃຊ້ນັກຮຽນ/ຍົກຍ້າຍນັກຮຽນ(The Student Services/Transfers Office) ຕ້ອງດຳເນີນການຮັບເອົາໃບສມັກໃຫ້ແຕ່ລະໂຮງຮຽນ. ການຄັດເລືອກຕ້ອງຖືກພິຈາຣະນາອີງຕາມບ່ອນວ່າງທີ່ມີຢູ່ໂຮງຮຽນຫລືໂຄງການທີ່ບໍ່ມີເງື່ອນໄຂສຳລັບໂຮງຮຽນຫລືໂຄງການທີ່ບໍ່ມີເງື່ອນໄຂການເຂົ້າຮຽນ. ສຳລັບໂຮງຮຽນຫລືໂຄງການທີ່ມີເງື່ອນໄຂການເຂົ້າຮຽນ, ການຄັດເລືອກຖືກພິຈາຣະນາອີງຕາມບ່ອນວ່າງທີ່ມີຢູ່ແລະມີເງື່ອນໄຂຕາມມາຕການເຂົ້າຮຽນ. ຈະບໍ່ພິຈາຣະນາໃບສມັກຕາມລຳດັບຫລືວັນທີທີ່ໄດ້ຮັບ. ແນວໃດກໍຕາມ, ການພິຈາຣະນາ "ຮອບທຳອິດ" ແມ່ນເຮັດພ້ອມກັນກັບຜູ້ສມັກທີ່ສົ່ງໃບສມັກມາພາຍໃນກຳນົດວັນສຸດ.

ເມື່ອມີການສມັກຫລາຍກວ່າບ່ອນວ່າງທີ່ມີຢູ່ສຳລັບໂຮງຮຽນຫລືໂຄງການທີ່ບໍ່ມີເງື່ອນໄຂການເຂົ້າຮຽນ, ຫ້ອງການຮັບໃຊ້ນັກຮຽນ/ຍົກຍ້າຍນັກຮຽນຕ້ອງທຳການຈົກສລາກເພື່ອຄັດເລືອກເອົານັກຮຽນຈາກກຸ່ມນັກຮຽນທີ່ມີສິດທີ່ຈະຖືກຄັດເລືອກ ຕາມທີ່ໄດ້ວາງເງື່ອນໄຂໄວ້ຢູ່ນະໂຍບາຍຂອງສະພາປົກຄອງການສຶກສາ(BP) 5116.1.

## ການຮັບເອົາ

ພໍ່ແມ່ຫລືນັກຮຽນທີ່ຖືກຮັບເອົາຈະໄດ້ຮັບບັດຮັບເອົາທີ່ສົ່ງມາຕາມໄປສະນີ ທີ່ຈະຕ້ອງໄດ້ຂຽນໃສ່ໃຫ້ຄົບຖ້ວນເພື່ອຮັບເອົາການຈັດເຂົ້າຮຽນໂຮງຮຽນ Magnet ຢ່າງເປັນທາງການ. ຜູ້ສມັກທີ່ບໍ່ສົ່ງຄືນບັດຮັບເອົາໃຫ້ຫ້ອງການຮັບໃຊ້ນັກຮຽນ/ຍົກຍ້າຍນັກຮຽນຕາມກຳນົດວັນສຸດທ້າຍນັ້ນຈະຖືກຍົກເລີກການຈັດເຂົ້າຮຽນຂອງພວກເຂົາຢູ່ໂຮງຮຽນຫລືໂຄງການ. ໃຫ້ເບິ່ງ <u>ໜັງສືແຈ້ງການຂອງພໍ່ແມ່ແລະນັກຮຽນແລະປື້ມຄູ່ມືລາຍຣະອຽດຂອງເຂດໂຮງຮຽນ</u> ຫລືໃຫ້ເບິ່ງຢູ່ອິນເທີເນັດ website: www.fresnounified.org (ໂຮງຮຽນຫລືໂຮງຮຽນ Magnet) ສຳລັບກຳນົດວັນສຸດທ້າຍ.

ພໍ່ແມ່ຫລືຜູ້ປົກຄອງຜູ້ທີ່ຮັບເອົາການຈົດຊື່ເຂົ້າຮຽນ Magnet, ການຍົກຍ້າຍອີງຕາມກົດໝາຍບໍ່ປ່ອຍໃຫ້ເດັກຄົນໃດລ້າຫລັງ, ຫລືການເປີດຈົດຊື່ເຂົ້າຮຽນທົ່ວໄປນັ້ນຈະຖືກລົບຊື່ອອກຢ່າງອັດຕະໂນມັດຈາກ "ຈຳນວນ" ຂອງຜູ້ສມັກທີ່ມີສິດຖືກຄັດເລືອກທັງໝົດສຳລັບການຄັດເລືອກເຂົ້າຮຽນໂຮງຮຽນຫລືໂຄງການອື່ນທີ່ພວກເຂົາໄດ້ສມັກ.

## ການຍົກເລີກ

ໂດຍການຍົກເວັ້ນຂອງກົດໝາຍບໍ່ປ່ອຍໃຫ້ເດັກຄົນໃດລ້າຫລັງກ່ຽວກັບການເລືອກຍົກຍ້າຍແລະຄວາມປອດພັຍຂອງການຍົກຍ້າຍ, ການຍົກຍ້າຍຂອງນັກຮຽນລະຫວ່າງເຂດໂຮງຮຽນທັງໝົດອາດຈະຖືກຍົກເລີກສຳລັບເງື່ອນໄຂໃດໜຶ່ງຕໍ່ລົງໄປນີ້:

- ຄະແນນ, ການມາຮຽນແລະຫລືການປະພຶດທີ່ຮັບເອົາບໍ່ໄດ້:
    1. ຄະແນນສະເລັ່ຽ(GPA) ນ້ອຍກວ່າ 2.0 ອາດຈະເປັນສາເຫດໃນການຍົກເລີກ. ນັກຮຽນທີ່ມີຄວາມຕ້ອງການພິເສດຕ້ອງໄດ້ຮັກສາຄວາມກ້າວໜ້າດ້ານການຮຽນຫລືຄະແນນໃຫ້ສເນີຕົ້ນສເນີປາຍກັບເປົ້າໝາຍແລະວັດຖຸປະສົງຂອງນັກຮຽນທີ່ໄດ້ກ່າວໄວ້ຢູ່ແຜນການສຶກສາສ່ວນບຸກຄົນ(IEP).
    2. ການຂາດໂຮງຮຽນບໍ່ໄດ້ຮັບອະນຸຍາດຫົກເທື່ອຫລືຫລາຍກວ່າຫົກເທື່ອຫລືການຂາດຫ້ອງຮຽນທີ່ບໍ່ໄດ້ຮັບອະນຸຍາດສາມສິບຫົກຫ້ອງຮຽນຕໍ່ພາກຮຽນໜຶ່ງ (ຫລືການເສັຽເວລາຂອງຫ້ອງຮຽນເນື່ອງຈາກການມາຊ້າ) ອາດຈະເປັນສາເຫດໃນການຍົກເລີກ.
    3. ຖືກຫ້າມມາຮຽນສອງເທື່ອຫລືຫລາຍກວ່າສອງເທື່ອໃນໄຕຣມາດໜຶ່ງອາດຈະເປັນສາເຫດໃນການຍົກເລີກ.
- ຖ້າວ່າພໍ່ແມ່ຫລືຜູ້ປົກຄອງແຈ້ງທີ່ຢູ່ປອມຫລືຂໍ້ມູນສິ່ງໃດສິ່ງໜຶ່ງບໍ່ຖືກຕ້ອງຢູ່ໃບສມັກຫລືໃບສເນີຂໍຍົກເວັ້ນ.
- ຖ້າວ່ານັກຮຽນຖືກໄລ່ອອກໂຮງຮຽນ.
- ຖ້າວ່າການຈົດຊື່ເຂົ້າຮຽນຢູ່ໂຮງຮຽນຫລືຢູ່ຊັ້ນຮຽນເຮັດໃຫ້ໂຮງຮຽນມີຈຳນວນນັກຮຽນຫລາຍເກີນໄປຫລືບໍ່ສອດຄ່ອງກັບແຜນການຫລຸດຂນາດຫ້ອງຮຽນຂອງເຂດໂຮງຮຽນ.
- ຖ້າວ່ານັກຮຽນສມັກໃຈອອກໂຮງຮຽນຫລືເຂດໂຮງຮຽນທີ່ການຍົກຍ້າຍຖືກອະນຸມັດ.

## ການຍົກຍ້າຍອອກຂອບເຂດຂອງເຂດໂຮງຮຽນຟເຣສໂນ

ຖ້າວ່ານັກຮຽນຍົກຍ້າຍອອກຈາກເຂດໂຮງຮຽນໃນຣະຍະຫ້ອງຮຽນຂອງສົກຮຽນ, ເຂດໂຮງຮຽນຈະອະນຸຍາດໃຫ້ນັກຮຽນຮຽນໃຫ້ຄົບສົກຮຽນໂດຍມີການຮັບຮອງຂອງເຂດໂຮງຮຽນໃໝ່ທີ່ຈະຍ້າຍໄປຢູ່. ຖ້າວ່າການຍົກຍ້າຍລະຫວ່າງເຂດໂຮງຮຽນຖືກຮັບຮອງແລະເຂດໂຮງຮຽນອອກໃບອະນຸຍາດເພື່ອອະນຸຍາດໃຫ້ເຂົ້າຮຽນລະຫວ່າງເຂດໂຮງຮຽນສຳລັບສົກຮຽນຕໍ່ໄປ, ນັກຮຽນອາດຈະສືບຕໍ່ຮຽນຢູ່ໂຮງຮຽນຫລືໂຄງການ Magnet ເມື່ອການຮັບຮອງເອົາແມ່ນກ່ຽວກັບວຽກງານຫລືເຫດຜົນການດູແລເດັກ (ຊັ້ນ K. ຫາປີທີ 6) ແລະເມື່ອມີບ່ອນວ່າງໃຫ້ນັກຮຽນທີ່ບໍ່ຢູ່ໃນເຂດໂຮງຮຽນຟເຣສໂນເພື່ອສືບຕໍ່ຮຽນຢູ່ໂຮງຮຽນຫລືໂຄງການ Magnet, ລູກຂອງທ່ານຈະໝົດກຳນົດການຈົດຊື່ເຂົ້າຮຽນຂອງພວກເຂົາໃນຕອນທ້າຍຊັ້ນຮຽນຕໍ່ໄປຫລັງຈາກໄດ້ພິຈະຣະນາວ່າທ່ານບໍ່ອາສັຍຢູ່ພາຍໃນຂອບເຂດຂອງເຂດໂຮງຮຽນຟເຣສໂນ. ເຂດໂຮງຮຽນຈະບໍ່ຮັບຜິດຊອບກັບການລົບກວນການສຶກສາຫລືຄ່າໃຊ້ຈ່າຍໃດໆທີ່ພົວພັນກັບການໝົດກຳນົດຂອງການຈົດຊື່ເຂົ້າຮຽນຂອງລູກທ່ານຈາກໂຮງຮຽນຫລືໂຄງການ Magnet ແລະຈາກຫລັກສູດຮຽນຫລືຫລັກສູດຮຽນເພີ້ມ.